ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

# ບົດຂ່າວ
# ກອງປະຊຸມທົບທວນຜົນການດໍາເນີນທຸລະກິດທົ່ວລະບົບ ທຄຕລ ປະຈໍາ ໄຕມາດ 3 ປີ 2021

ໃນວັນທີ 28 ຕຸລາ 2021, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມ ທົບທວນຜົນການດໍາເນີນທຸລະກິດປະຈໍາໄຕມາດ 3 ປີ 2021 ຜ່ານລະບົບ Zoom Online Meeting ພາຍໃຕ້ການເປັນປະທານຂອງ ທ່ານ ຄໍາພຸດ ສິດທິລາດ, ຜູ້ອໍານວຍການ ທຄຕລ. ຈຸດປະສົງຫຼັກ ຂອງກອງປະຊຸມແມ່ນເພື່ອທົບທວນຜົນການດໍາເນີນທຸລະກິດ ທຄຕລ ປະຈໍາໄຕມາດ 3/2021 ແລະ ໄດ້ຮັບຟັງການໂອ້ລົມຈາກ ທ່ານຜູ້ອໍານວຍການ ຂອງ ທຄຕລ ຕໍ່ກັບ ທິດທາງແຜນທຸລະກິດໃນປີ 2022.




ກອງປະຊຸມໄດ້ດໍາເນີນເປັນເວລາເຄິ່ງວັນ ເຊິ່ງໄດ້ມີຜູ້ເຂົ້າຮ່ວມຈາກ 20 ສາຂາທົ່ວປະເທດ, 15 ພະແນກ ແລະ 3 ສູນ ຂອງສໍານັກງານໃຫຍ່ ພ້ອມທັງ ພະນັກງານທີ່ກ່ຽວຂ້ອງ ລວມທັງໝົດ 85 ທ່ານ.

ກອງປະຊຸມໄດ້ພ້ອມກັນປຶກສາຫາລືບັນຫາຂໍ້ຄົງຄ້າງ ເພື່ອປັບປຸບວຽກງານຕ່າງໆໃຫ້ດີຂຶ້ນເຊັ່ນ:

- ການປຶກສາຫາລື ແລະ ປະເມີນຄືນຜົນການດຳເນີນທຸລະກິດຂອງ ທຄຕລ.
- ທີ່ປະຊຸມໄດ້ຮັບຟັງທິດທາງການດັດແກ້ແຜນທຸລະກິດ ທົ່ວລະບົບ ທຄຕລ ປະຈຳປີ 2021, ເນື່ອງຈາກ ປີ 2021 ນີ້ເປັນ ປີໜຶ່ງທີ່ການດຳເນີນທຸລະກິດຂອງ ທຄຕລ ພົບກັບຄວາມຫຍຸ້ງຍາກຈາກສະພາບການລະບາດຂອງ ພະຍາດ COVID-19 ທີ່ກະທົບຕໍ່ລະເສດຖະກິດລວມ ແລະ ສົ່ງຜົນກະທົບໃຫ້ແກ່ຂະແໜງການ ທະນາຄານ ໂດຍສະເພາະແມ່ນການດຳເນີນທຸລະກິດຂອງ ທຄຕລ ແມ່ນມີຄວາມສ່ຽງສູງສົມຄວນ ຕິດພັນກັບການຄຸ້ມຄອງບໍລິຫານສິນເຊື່ອທີ່ເປັນລາຍຮັບຫຼັກຂອງ ທຄຕລ. ສະນັ້ນ, ທຄຕລ ຈຳເປັນຕ້ອງໄດ້ມີການປັບປຸງແຜນທຸລະກິດ ເຊິ່ງໄດ້ຮັບຮອງຈາກສະພາບໍລິຫານ ແລະ ຈະນຳໄປຜ່ານກອງປະຊຸມຜູ້ຖືຮຸ້ນເພື່ອຮັບຮອງໃນວັນທີ 29 ຕຸລາ 2021 ນີ້.

- ໃນທ່າມກາງສະພາບທີ່ຫຍຸ້ງຍາກໃນປະຈຸບັນ ທຄຕລ ກໍ່ໄດ້ໝູນໃຊ້ຫລາຍໆຜະລິດຕະພັນ ທີ່ມີຢູ່ເພື່ອຂະຫຍາຍຖານລູກຄ້າ ໂດຍສະເພາະຜະລິດ ຕະພັນ online banking ທີ່ມີຖານຜູ້ຊົມໃຊ້ເພີ່ມຂຶ້ນສູງ ແລະ ຢູ່ໃນເກນຕາມແຜນທີ່ກຳນົດ ພະນັກງານທຸກຄົນຕ້ອງເປັນເຈົ້າການຂະຫຍາຍທຸກຜະລິດຕະພັນດ້ວຍຮູບແບບເປັນການຕະຫຼາດໄປພາຍໃນຕົວ ພ້ອມດຽວກັນນັ້ນ ທຄຕລ ກໍ່ຈະສືບຕໍ່ຄົ້ນຄ້ວາປັບປຸງການບໍລິການຂອງແຕ່ລະຜະລິດຕະພັນ, ເພີ່ມການລະດົມລູກຄ້າຕື່ມໃນອະນາຄົດເພື່ອເພີ່ມຍອດຂາຍ ແລະ ເພີ່ມລາຍຮັບຈາກຜະລິດຕະພັນໃຫ້ຫຼາຍຂຶ້ນ.

- ທ່ານ ຜູ້ອຳນວຍການ ທຄຕລ ໄດ້ເນັ້ນໜັກ ໃຫ້ທຸກພາກສ່ວນ ທຄຕລ ເອົາໃຈໃສ່ໃນການແກ້ໄຂບັນຫາ NPL ໃນປະຈຸບັນ ເປັນບູລິມາສິດອັນດັບໜຶ່ງ ພ້ອມທັງເອົາໃຈໃສ່ ສູ້ຊົນໃນການປະຕິບັດແຜນການດຳເນີນງານຕ່າງໆ ຂອງ ທຄຕລ ໃຫ້ເຂັ້ມແຂງ ແລະ ມີປະສິດທິຜົນ.

- ທ່ານ ຜູ້ອຳນວຍການ ທຄຕລ ຍັງໄດ້ມອບໃຫ້ບັນດາພະແນກ, ສູນ ແລະ ສາຂາ ໃນທົ່ວລະບົບ ທຄຕລ ເອົາໃຈໃສ່ວຽກງານການເມືອງແນວຄິດຂອງພະນັກງານ ໃຫ້ມີຄວາມອຸ່ນອ່ຽນໃນການປະຕິບັດວຽກງານວິຊາສະເພາະ; ເອົາໃຈໃສ່ເຝົ້າລະວັງ ແລະ ປະຕິບັດ ມາດຕະການປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ 19 ຕາມແຈ້ງການຂອງລັດຖະບານ ແລະ ຄະນະສະເພາະກິດແຕ່ລະໄລຍະ, ທັງນີ້ເພື່ອຮັບປະກັນການປະຕິບັດວຽກງານການບໍລິການຂອງ ທຄຕລ ໃຫ້ສາມາດດຳເນີນໄປໄດ້ຢ່າງມີປະສິດທິພາບ.